ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 404 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 23.11.2007.

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຍຸຕິທຳ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສ. ປ. ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີວ່າການ ກະຊວງຍຸຕິທຳ ສະບັບເລກທີ 204/ກຍ, ລົງວັນທີ 08 ພະຈິກ 2007;
- ອີງຕາມ ການສະເໜີ ຂອງທ່ານລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 117/ທປຄ, ລົງວັນທີ 20 ພະຈິກ 2007.

## ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ ອອກດຳລັດ:

### ໝວດທີ I
### ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 1. ທີ່ຕັ້ງ**

ກະຊວງຍຸຕິທຳ ຊຽນຫຍໍ້ " ກຍ " ຊຽນເປັນພາສາຝຣັ່ງ ( **Ministère** De La Justice ) ຊຽນຫຍໍ້ " M L J " ແມ່ນຂະແໜງການລັດບໍລິຫານດ້ານກົດໝາຍ ແລະ ວຽກງານຍຸຕິທຳຂັ້ນສູນກາງ ຢູ່ໃນໂຄງປະກອບກົງຈັກຂອງລັດຖະບານ. ເຄື່ອນໄຫວວຽກງານພາຍໃຕ້ການຊີ້ນຳຂອງນາຍົກລັດຖະມົນຕີແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ມາດຕາ 2. ພາລະບົດບາດ

ກະຊວງ ຍຸຕິທຳ ມີພາລະບົດເປັນເສນາທິການໃຫ້ລັດຖະບານໃນການຄຸ້ມຄອງມະຫາພາກ ກ່ຽວກັບວຽກງານກົດໝາຍ ແລະ ຍຸຕິທຳ. ການປະຕິບັດຄວາມສະເໝີພາບຕໍ່ໜ້າກົດໝາຍທົ່ວສັງຄົມຄື:

1. ຄຸ້ມຄອງການຄົ້ນຄວ້າ, ການສ້າງຮ່າງກົດໝາຍ ແລະ ຮ່າງນິຕິກຳໃຫ້ເປັນລະບົບເທື່ອລະກ້າວ;
2. ຄຸ້ມຄອງ ແລະ ຈັດຕັ້ງການໂຄສະນາສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍທົ່ວສັງຄົມ;
3. ຄຸ້ມຄອງການປະຕິບັດຄວາມສະເໝີພາບຕໍ່ໜ້າກົດໝາຍ, ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ວຽກງານຍຸຕິທຳອື່ນໆ;
4. ພົວພັນຮ່ວມມືກັບສາກົນໃນດ້ານກົດໝາຍ ແລະ ວຽກງານຍຸຕິທຳ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3. ໜ້າທີ່ ຂອງກະຊວງຍຸຕິທຳ

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດຳລັດຂອງປະທານປະເທດ;
2. ຫັນແນວທາງ ແຜນນະໂຍບາຍຂອງພັກ ແລະ ແຜນການຂອງລັດມາເປັນທິດທາງແຜນການ, ໂຄງການ, ຮ່າງກົດໝາຍ ແລະ ລະບຽບການຕ່າງໆໃນວຽກງານຍຸຕິທຳ;
3. ຄົ້ນຄວ້າ ແລະ ສ້າງແຜນຍຸດທະສາດໃນການສ້າງ, ປັບປຸງ ແລະຂະຫຍາຍລະບົບກົດໝາຍແຫ່ງ ສປປ ລາວ;
4. ຄົ້ນຄວ້າວິທະຍາສາດກົດໝາຍ, ຮ່າງກົດໝາຍຍຸຕິທຳ, ກົດໝາຍອື່ນໆ, ສົນທິສັນຍາ ແລະ ນິຕິກຳຕ່າງໆທີ່ລັດຖະບານມອບໝາຍໃຫ້; ໃຫ້ຄວາມເຫັນແກ່ບັນດາກະຊວງ, ອົງການ ແລະ ການຈັດຕັ້ງອື່ນໆ ກ່ຽວກັບການສ້າງຮ່າງກົດໝາຍ ແລະ ວິທີການສ້າງນິຕິກຳ; ເຂົ້າຮ່ວມປະກອບຄຳເຫັນໃນການສ້າງຮ່າງກົດໝາຍ ແລະ ນິຕິກຳຕ່າງໆ ທີ່ຂະແໜງການອື່ນສະເໜີມາ, ສ້າງປຶ້ມອະທິບາຍກົດໝາຍ ແລະ ໃຫ້ຄຳເຫັນໃນແງ່ກົດໝາຍຕໍ່ສັນຍາກູ້ຢືມ ຫລື ລົງທຶນຕ່າງໆ;
5. ຈັດຕັ້ງການສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ກົດໝາຍ, ປະກອບຄຳເຫັນໃຫ້ບັນດາກະຊວງ, ອົງການ ແລະ ການຈັດຕັ້ງອື່ນໆກ່ຽວກັບແຜນການ, ວິທີການໂຄສະນາເຜີຍແຜ່ກົດໝາຍ ແກ່ພົນລະເມືອງໃຫ້ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ;
6. ລວບລວມບັນດາກົດໝາຍ ແລະ ນິຕິກຳຕ່າງໆ ເພື່ອສ້າງປຶ້ມສັງລວມກົດໝາຍ, ສ້າງປະມວນກົດໝາຍ, ອອກວາລະສານກົດໝາຍ, ວຽກງານຍຸຕິທຳ ແລະ ຈົດໝາຍເຫດທາງລັດຖະການ;
7. ຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດໃຫ້ມີປະສິດທິຜົນ ແລະ ເຂັ້ມງວດ;
8. ຄຸ້ມຄອງດ້ານວິຊາການຕໍ່ພະແນກຍຸຕິທຳແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການຍຸຕິທຳເມືອງ, ຄຸ້ມຄອງສຳນັກງານທະບຽນສານ, ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະພາທະນາຍຄວາມ, ຫ້ອງການທີ່ປຶກສາກົດໝາຍ ແລະ ການຈັດຕັ້ງຍຸຕິທຳອື່ນໆທີ່ຂຶ້ນກັບຂະແໜງຍຸຕິທຳ;
9. ຄົ້ນຄ້ວາ ແລະ ປະກອບຄຳເຫັນໃສ່ຄຳຮ້ອງ ກ່ຽວກັບບັນຫາສັນຊາດແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ;

10. ເປັນໃຈກາງປະສານກັບອົງການຕ່າງໆໃນການຄຸ້ມຄອງ ແລະ ກວດກາການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
11. ສ້າງ, ບຳລຸງ ແລະ ຍົກລະດັບທາງດ້ານການເມືອງແນວຄິດ, ຄຸນສົມບັດ, ຈັນຍາທຳ, ແບບແຜນວິທີເຮັດວຽກ ແລະ ວິຊາສະເພາະກົດໝາຍໃຫ້ແກ່ພະນັກງານຂອງຕົນທັງຢູ່ສູນກາງ ແລະ ທ້ອງຖິ່ນໃຫ້ມີຄວາມຮູ້, ຄວາມສາມາດປະຕິບັດໜ້າທີ່ວຽກງານ ພ້ອມທັງບັນຈຸ, ສັບຊ້ອນ, ຄຸ້ມຄອງ ແລະ ນຳໃຊ້ພະນັກງານ ;
12. ກວດກາການເຄື່ອນໄຫວ ປະຕິບັດໜ້າທີ່ຄວາມຮັບຜິດຊອບ ຂອງການຈັດຕັ້ງພັກ-ລັດ ທີ່ຂຶ້ນກັບສິດຄຸ້ມຄອງຂອງຂະແໜງການຕົນ ນັບແຕ່ສູນກາງລົງຮອດທ້ອງຖິ່ນ. ເພື່ອສະກັດກັ້ນ ປະກົດການລະເມີດມະຕິ, ຄຳສັ່ງ, ກົດລະບຽບ ຂອງພັກ ແລະ ນິຕິກຳຂອງລັດ ; ກວດກາການຈັດຕັ້ງ ຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ຄຳແນະນຳ ຂອງພັກ-ລັດ ມາເປັນນິຕິກຳ ຂອງກະຊວງ, ກົມ, ຫ້ອງການ, ສ.ຄ.ສ, ບັນດາອົງການຈັດຕັ້ງມະຫາຊົນ ແລະ ຂະແໜງການທີ່ ຂຶ້ນກັບຕົນ;
13. ສ້າງແຜນການ, ຄຸ້ມຄອງ, ນຳໃຊ້ງົບປະມານ ແລະ ຄຸ້ມຄອງຊັບສົມບັດຕ່າງໆ ໃນຂະແໜງຂອງຕົນ;
14. ຮັບ, ພິຈາຈາລະນາ ແລະ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ການຈັດຕັ້ງ ຫຼື ບຸກຄົນພາຍໃນ ແລະ ຕ່າງປະເທດສະເໜີມາ ; ຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ກ່ຽວກັບບັນຫາຄວາມຍຸຕິທຳຕາມຂອບເຂດສິດຂອງຕົນ;
15. ພົວພັນ, ຮ່ວມມື, ແລກປ່ຽນບົດຮຽນທາງດ້ານກົດໝາຍ ແລະ ວຽກງານຍຸຕິທຳກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;
16. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງນາຍົກລັດຖະມົນຕີແຫ່ງ ສປປລາວ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 4. ຂອບເຂດສິດ ຂອງກະຊວງຍຸຕິທຳ**

1. ສ້າງຮ່າງກົດໝາຍ ແລະ ນິຕິກຳອື່ນໆ ໃນຂົງເຂດຍຸຕິທຳ ສະເໜີຕໍ່ລັດຖະບານພິຈາລະນາ;
2. ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາປັບປຸງ, ດັດແກ້ກົດໝາຍ ແລະ ນິຕິກຳອື່ນໆ ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບຕົວຈິງຂອງການຂະຫຍາຍຕົວທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມຢູ່ພາຍໃນປະເທດ;
3. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ແນໃສ່ປະຕິບັດໜ້າທີ່ຂອງຕົນ;
4. ສະເໜີສ້າງຕັ້ງ ຫຼື ຍຸບເລີກ ບັນດາການຈັດຕັ້ງຍຸຕິທຳ ແລະ ໜ່ວຍງານວິຊາການຕ່າງໆ ທີ່ຂຶ້ນກັບສິດໃນການຄຸ້ມຄອງຂອງຕົນ;
5. ແຕ່ງຕັ້ງ, ສັບຊ້ອນ, ໂຍກຍ້າຍ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ພະນັກງານ ທີ່ຂຶ້ນກັບສິດໃນການຄຸ້ມຄອງຂອງຕົນ;
6. ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການຍຸຕິທຳເມືອງ ແລະ ການຈັດຕັ້ງຍຸຕິທຳອື່ນໆ ທີ່ຂຶ້ນກັບຂະແໜງຍຸຕິທຳ;
7. ພົວພັນ, ປະສານສົມທົບກັບບັນດາກະຊວງ, ຂະແໜງການ, ອົງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນໆ ໃນການປະຕິບັດໜ້າທີ່ຂອງຕົນ;

8. ງົດການປະຕິບັດ, ລົບລ້າງ ຫລື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງຂະແໜງການຂັ້ນລຸ່ມທີ່ຂຶ້ນກັບຕົນ ແລະ ສະເໜີງົດ, ປ່ຽນແປງ ຫລື ຍົກເລີກນິຕິກຳຂອງແໜງການອື່ນໆ ຫລື ຂອງອຳນາດການປົກຄອງທ້ອງຖິ່ນ ທີ່ຂັດກັບລະບຽບກົດໝາຍ;
9. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕາມພາລະບົດບາດຂອງຕົນ;
10. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງນາຍົກລັດຖະມົນຕີແຫ່ງ ສປປລາວ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງກະຊວງຍຸຕິທຳ ປະກອບດ້ວຍກົງຈັກວິຊາການຢູ່ຂັ້ນກະຊວງ ແລະ ຂະແໜງຍຸຕິທຳທ້ອງຖິ່ນ ຊຶ່ງລວມມີພະແນກຍຸຕິທຳແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການຍຸຕິທຳເມືອງ ແລະ ບັນດາການຈັດຕັ້ງຍຸຕິທຳອື່ນໆ ດັ່ງນີ້:

**ກ. ກົງຈັກບໍລິຫານ, ວິຊາການ ຂັ້ນກົມ ແລະ ທຽບເທົ່າກົມ ຂອງກະຊວງປະກອບດ້ວຍ:**

1. ຫ້ອງການກະຊວງ;
2. ກົມ ຈັດຕັ້ງ ແລະ ພະນັກງານ;
3. ກົມ ກວດກາ;
4. ກົມ ກົດໝາຍ;
5. ກົມ ໂຄສະນາອົບຮົມກົດໝາຍ;
6. ກົມ ຄຸ້ມຄອງລະບົບຍຸຕິທຳ;
7. ກົມ ທະບຽນສານ;
8. ກົມ ຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
9. ສະຖາບັນຄົ້ນຄວ້າກົດໝາຍ ແລະ ຮ່ວມມືກັບຕ່າງປະເທດ;
10. ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
11. ສະຖາບັນອົບຮົມກົດໝາຍ ແລະ ວຽກງານຍຸຕິທຳ.

ນອກຈາກນີ້, ຍັງມີ ໂຮງຮຽນ ຫລື ວິທະຍາໄລ ກົດໝາຍຈຳນວນໜຶ່ງຂຶ້ນກັບກະຊວງ.

**ຂ. ກົງຈັກການຈັດຕັ້ງ ຍຸຕິທຳຢູ່ທ້ອງຖິ່ນ ປະກອບດ້ວຍ:**

1. ພະແນກຍຸຕິທຳແຂວງ, ນະຄອນຫຼວງວຽງຈັນ;
2. ຫ້ອງການຍຸຕິທຳເມືອງ, ເທດສະບານ;
3. ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ຄ. ການຈັດຕັ້ງອາຊີບກົດໝາຍທາງສັງຄົມປະກອບດ້ວຍ:**

1. ສະພາທະນາຍຄວາມ;
2. ຫ້ອງການທີ່ປຶກສາກົດໝາຍ.

ມາດຕາ 6. ໂຄງປະກອບບຸກຄະລາກອນ

ກ. ຢູ່ຂັ້ນກະຊວງປະກອບມີບຸກຄະລະກອນດັ່ງນີ້:

1. ກະຊວງຍຸຕິທຳ ປະກອບມີລັດຖະມົນຕີວ່າການ ເປັນຫົວໜ້າກະຊວງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ໂຍກຍ້າຍ ຫລື ປົດຕຳແໜ່ງຈາກປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ແລະ ໂດຍການຮັບຮອງຈາກສະພາແຫ່ງຊາດ; ລັດຖະມົນຕີວ່າການຮັບຜິດຊອບຕໍ່ລັດຖະບານ ກ່ຽວກັບການປະຕິບັດໜ້າທີ່ການເມືອງຂອງກະຊວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2, 3 ແລະ 4 ຂອງດຳລັດສະບັບນີ້ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍອື່ນໆ;
2. ກະຊວງຍຸຕິທຳມີລັດຖະມົນຕີຊ່ວຍວ່າການ ຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ,ໂຍກຍ້າຍ ຫລື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ ບົນພື້ນຖານຄວາມເຫັນດີເປັນເອກະພາບຂອງລັດຖະມົນຕີວ່າການ. ລັດຖະມົນຕີຊ່ວຍວ່າການ ເປັນຜູ້ຊ່ວຍລັດຖະມົນຕີວ່າການໃນການນຳພາ, ອຳນວຍຄວບຄຸມວຽກງານລວມຂອງກະຊວງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງລັດຖະມົນຕີວ່າການ;
3. ໃນກໍລະນີຕິດຂັດ ຫືລ ບໍ່ຢູ່, ລັດຖະມົນຕີວ່າການ ຕ້ອງມອບສິດປະຈຳການຊົ່ວຄາວ ຢ່າງເປັນລາຍລັກອັກສອນ ໃຫ້ລັດຖະມົນຕີຊ່ວຍວ່າການ ຜູ້ໃດຜູ້ໜຶ່ງວ່າການແທນ. ໃນເວລາລັດຖະມົນຕີວ່າການກັບຄືນມາຜູ້ວ່າການແທນ ຕ້ອງລາຍງານວຽກທີ່ຕົນໄດ້ແກ້ໄຂໃຫ້ລັດຖະມົນຕີວ່າການຊາບ;
4. ການນຳດ້ານວິຊາການຂອງກະຊວງຍຸຕິທຳ ປະກອບມີຫົວໜ້າຫ້ອງການ, ຫົວໜ້າກົມ ແລະ ຕຳແໜ່ງທຽບເທົ່າຕ່າງໆ ຊຶ່ງໄດ້ຮັບການແຕ່ງຕັ້ງ, ໂຍກຍ້າຍ ຫລື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ ບົນພື້ນຖານຄວາມເຫັນດີເປັນເອກະພາບຂອງລັດຖະມົນຕີວ່າການ. ມີຮອງຫົວໜ້າຫ້ອງການ, ຮອງຫົວໜ້າ ກົມ ແລະ ຕຳແໜ່ງທຽບເທົ່າ, ຫົວໜ້າ ແລະ ຮອງຫົວໜ້າພະແນກ ຊຶ່ງໄດ້ຮັບການແຕ່ງຕັ້ງ, ໂຍກຍ້າຍ ຫລື ປົດຕຳແໜ່ງໂດຍລັດຖະມົນຕີວ່າການ ຕາມການສະເໜີຂອງຫົວໜ້າ ກົມຈັດຕັ້ງ, ພັກ-ພະນັກງານ ບົນພື້ນຖານຄວາມເຫັນດີເປັນເອກະພາບກັບຫົວໜ້າຫ້ອງການ, ຫົວໜ້າກົມ ແລະ ອົງການທຽບເທົ່າທີ່ກ່ຽວຂ້ອງ;
5. ກະຊວງຍຸຕິທຳປະກອບດ້ວຍພະນັກງານວິຊາການຈຳນວນໜຶ່ງ ເພື່ອປະກອບເຂົ້າຕຳແໜ່ງງານຕ່າງໆ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ.

ຂ. ຢູ່ຂັ້ນທ້ອງຖິ່ນປະກອບມີບຸກຄະລາກອນດັ່ງນີ້:

1. ພະແນກຍຸຕິທຳແຂວງ, ນະຄອນຫຼວງວຽງຈັນ: ປະກອບມີຫົວໜ້າ, ຮອງຫົວໜ້າພະແນກ, ຫົວໜ້າ, ຮອງຫົວໜ້າຫ້ອງການ ແລະ ພະນັກງານວິຊາການຈຳນວນໜຶ່ງເພື່ອປະກອບເຂົ້າໃນແຕ່ລະຕຳແໜ່ງງານຕາມຄວາມເໝາະສົມ;
2. ຫ້ອງການຍຸຕິທຳເມືອງ, ເທດສະບານ: ປະກອບມີຫົວໜ້າ, ຮອງຫົວໜ້າ, ຫົວໜ້າໜ່ວຍງານ ແລະ ພະນັກງານວິຊາການຈຳນວນໜຶ່ງຕາມຄວາມເໝາະສົມ;
3. ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ: ຢູ່ໃນພະແນກຍຸຕິທຳແຂວງ, ນະຄອນຫຼວງວຽງຈັນປະກອບມີຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານວິຊາການຈຳນວນໜຶ່ງ ຕາມຄວາມເໝາະສົມ;
4. ໂຮງຮຽນ ຫລື ວິທະຍາໄລກົດໝາຍ: ປະກອບມີຫົວໜ້າ, ຮອງຫົວໜ້າອຳນວຍການ, ຫົວໜ້າ ແລະ ຮອງຫົວໜ້າ ໜ່ວຍງານ ແລະພະນັກງານວິຊາການຈຳນວນໜຶ່ງ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ.

ການແຕ່ງຕັ້ງ, ເລື່ອນຊັ້ນ, ເລື່ອນຂັ້ນ, ປົດຕຳແໜ່ງ, ປະຕິບັດນະໂຍບາຍ-ຍ້ອງຍໍ, ປະຕິບັດວິໄນ ແລະ ອື່ນໆ ຕໍ່ພະນັກງານ-ລັດຖະກອນ ຂະແໜງຍຸຕິທຳຢູ່ທ້ອງຖິ່ນ ແມ່ນປະຕິບັດຕາມລະບຽບກົດໝາຍ.

## ໝວດທີ IV
## ການພົວພັນ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7. ການພົວພັນລະຫວ່າງ ສາຍຕັ້ງ ແລະ ສາຍຂວາງ

ພະແນກຍຸຕິທຳແຂວງ, ນະຄອນຫຼວງວຽງຈັນ ແລະຫ້ອງການຍຸຕິທຳເມືອງ, ເທດສະບານ ແມ່ນຂຶ້ນກັບຄວາມຮັບຜິດຊອບຂອງອຳນາດການປົກຄອງແຂວງ, ນະຄອນຫຼວງວຽງຈັນ ແລະ ເມືອງ, ເທດສະບານ ຢ່າງຂາດຕົວທາງດ້ານຊີວິດການເມືອງ, ດ້ານງົບປະມານ, ເງິນເດືອນ, ພາຫະນະ ແລະ ອຸປະກອນຮັບໃຊ້ ຕ່າງໆ. ສ່ວນກະຊວງຍຸຕິທຳ ແມ່ນຮັບຜິດຊອບທາງດ້ານວິຊາການ ແລະ ການບຳລຸງສ້າງພະນັກງານ ໂດຍສະເພາະແມ່ນພະນັກງານວິຊາສະເພາະກົດໝາຍ ແລະ ວຽກງານຍຸຕິທຳ.

### ມາດຕາ 8. ຫຼັກການ ແລະ ແບບແຜນວິທີເຮັດວຽກ

ກະຊວງຍຸຕິທຳ ເຄື່ອນໄຫວວຽກງານຕາມຫຼັກການ ແລະ ແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກຕາມຫລັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ຕາມລະບົບແບ່ງຂັ້ນຄຸ້ມຄອງສົມທົບກັບການປະຕິບັດລະບອບຫົວໜ້າດຽວ;
2. ເຮັດວຽກຢ່າງມີແຜນການ, ມີຈຸດສຸມ, ມີຈຸດທົດລອງ, ມີການປະສານສົມທົບຢູ່ພາຍໃນກັບຂະແໜງການ ແລະ ທ້ອງຖິ່ນຕ່າງໆ, ມີການຕິດຕາມກວດກາ, ສະຫລຸບ, ປະເມີນຜົນ ແລະ ຖອດຖອນບົດຮຽນຢ່າງເປັນປົກກະຕິ;
3. ເຮັດວຽກຕາມທິດນຳ ທັງເຮັດທັງຮຽນ ທັງກໍ່ສ້າງບຳລຸງພະນັກງານ, ສ້າງເງື່ອນໄຂໃຫ້ທຸກຄົນ ມີໂອກາດນຳໃຊ້ຄວາມຮູ້ຄວາມສາມາດ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ, ປະຕິບັດນິຕິທຳ ແລະ ຈັນຍາທຳ, ຍົກສູງຄວາມຮັບຜິດຊອບຂອງແຕ່ລະຄົນຕໍ່ໜ້າທີ່ວຽກງານ;
4. ປະຕິບັດມາດຕາການ ທັນລົງຮາກຖານ ແລະ ຈັດຕັ້ງປະຕິບັດຕົວຈິງ ໃຫ້ເກີດດອກອອກຜົນ;
5. ປະຕິບັດລະບອບສ່ອງແສງ ແລະ ລາຍງານຢ່າງເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

### ມາດຕາ 9. ງົບປະມານ ແລະ ກາປະທັບ

ກະຊວງຍຸຕິທຳ ມີງົບປະມານ ແລະ ກາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

### ມາດຕາ 10. ການຜັນຂະຫຍາຍ

ມອບໃຫ້ລັດຖະມົນຕີວ່າການກະຊວງຍຸຕິທຳ ອອກຂໍ້ຕົກລົງກຳນົດລະອຽດ ກ່ຽວກັບພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຫ້ອງການ, ບັນດາກົມ, ສະຖາບັນ, ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ໂຮງຮຽນ ຫລື ວິທະຍາໄລກົດໝາຍ, ພະແນກຍຸຕິທຳແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການຍຸຕິທຳ

ເມືອງ ແລະ ການຈັດຕັ້ງຍຸຕິທຳອື່ນໆ ທີ່ກຳນົດໄວ້ໃນມາດຕາ 5 ເທິງ ນີ້ ບົນພື້ນຖານຄວາມເປັນເອກະພາບກັບອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ກະຊວງຍຸຕິທຳ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນ ຕ່າງໆ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດສະບັບເລກທີ 123/ນຍ, ລົງວັນທີ 01 ກັນຍາ 2004. ນິຕິກຳໃດປະກາດໃຊ້ໃນເມື່ອກ່ອນທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

ບົວສອນ ບຸບຜາວັນ